## ແຫລ່ງຊ່ວຍເຫລືອ

ເພື່ອຈະເຮັດການສຳພາດໃຫ້ແລ້ວ, ລາຍງານການປ່ຽນແປງທຸກໆຢ່າງ ຫລື ເພື່ອຈະເວົ້າລົມກັນເຣື່ອງການຊ່ວຍເຫລືອອາຫານ, ເງິນສົດ ຫລື ການພະຍາ ບານ.. ........ 1-877-501-2233

ເພື່ອຈະສະມັກຂໍເອົາ, ເຮັດການສຳພາດທວນຄືນໃຫ້ແລ້ວ ຫລື ລາຍງານ ການປ່ຽນແປງສຳລັບໂຄງການຊ່ວຍເຫລືອການຝາກເດັກນ້ອຍ........ 1-844-626-8687

ການຊ່ວຍເຫລືອພະຍາບານສຳລັບຄົນແກ່ຊະຣາ, ຕາບອດ ຫລື ເສັຽອົງຄະ........ 1-877-501-2233

ໂຄງການ Answer Phone........ 1-877-980-9220

ເພື່ອຈະລາຍງານບັດ ເພໍ່ຖ ທີ່ສູນເສັຽໄປ ຫລື ຖືກຂະໂມຍໄປ..... 1-888-328-9271

ເພື່ອຈະລາຍງານການສໍໂກງ........ 1-800-562-6906

ສາຍໂທສຳລັບຜູ້ຮັບຝາກເດັກນ້ອຍເທົ່ານັ້ນ ........ 1-800-394-4571

ໂຄງການ WASHCAP (ໂຄງການໃບຄຳຮ້ອງຂໍລວມເຂົ້າກັນ ຂອງ ຣັດວໍຊິງຕັນ)........ 1-877-380-5784

*ຫ້ອງການບໍຣິການຊຸມນຸມຊົນເຄື່ອນທີ່*

www.DSHS.wa.gov/esa/csd-mobile-community-services-office

–ຫລື–

www.facebook.com/dshsmobileoffice



## ແຫລ່ງຊ່ວຍເຫລືອອື່ນໆ

ເພື່ອຈະສະມັກຂໍເອົາໂຄງການ Apple Health ........ 1-855-923-4633

ໂຄງການ Apple Health/ProviderOne ........ 1-800-562-3022

ສາຍໂທຣາຍຣະອຽດກ່ຽວກັບແຫລ່ງຊ່ວຍເຫລືອ ໃນຊຸມນຸມຊົນ........ 211

ພະແນກເກັບເງິນລ້ຽງລູກ (Division of Child Support) ........ 1-800-442-5437

ເພື່ອຈະລາຍງານການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍ ເດັກນ້ອຍ, ຄົນແກ່ຊາຣາ ຫລື ຄົນເສັຽອົງຄະ ........ 1-866-363-4276

ພະແນກບໍຣິການຮັບໃຊ້ປະຊາຊົນ........ 1-800-865-7801

ຣາຍຣະອຽດກ່ຽວກັບການປິ່ນປົວຢາເສບຕິດ ແລະ ເຫລົ້າ, ການພະນັນ ແລະ ສຸຂະພາບໂຣກຈິດ ........ 1-866-789-4276

*Childcare Aware* –
ເພື່ອຈະຊອກຫາບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດ ........ 1-800-424-2246

ສາຍດ່ວນເຣື່ອງຄວາມຮຸນແຮງໃນຄອບຄົວ ........ 1-800-799-7233

ເມດິແຄຣ໌ Medicare........ 1-800-633-4227

ພະແນກບໍຣິຫານຄວາມປອດພັຍຂອງສັງຄົມ (Social Security Administration) ........ 1-800-772-1213

Department of Social and Health Services
Community Services Division
Customer Service Contact Center
PO Box 11699 • Tacoma, WA 98411-9905

Toll Free: 877-501-2233 • TTY: 800-209-5446 or 711
Fax: 888-338-7410 • www.dshs.wa.gov

Department of Children, Youth, and Families
Child Care Subsidy Contact Center
PO Box 11346 • Tacoma, WA 98411

ພາລະຫນ້າທີ່ຂອງພະແນກບໍຣິຫານ
ການບໍຣິການດ້ານເສດຖະກິດ

ເພື່ອຈະປ່ຽນແປງຊີວິດໂດຍການໃຫ້ອຳນາດ
ບຸກຄົນ ແລະ ຄອບຄົວທີ່ຈະປະສົບຜົນສຳເຣັດ

Washington State
Department of Social & Health Services
*Transforming lives*

DSHS 22-1628 LA (Rev. 7/19)

# ສູນກາງຕິດຕໍ່ ປະຊາສັມພັນ (Customer Service Contact Center)



## ຈຸດມຸ່ງໝາຍຂອງພວກເຮົາ

ເພື່ອຈະປ່ຽນແປງຊີວິດໂດຍການໃຫ້ພະລັງດູນໃຈແກ່ບຸກຄົນ ແລະ ຄອບຄົວ ເພື່ອຈະປະສົບຜົນສຳເລັດໂດຍຜ່ານການຂະຫຍາຍການເຂົ້າເຖິງປະຊາຊົນຂອງລັດວໍຊິງຕັນ.

## ຂອບເຂດຂອງການບໍລິການ

- ຄຳຮ້ອງຂໍເອົາອາຫານຈຳເປັນ ແລະ ການທວນຄືນເບິ່ງເງື່ອນໄຂຮັບເອົາ
- ການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF) ການທວນຄືນເບິ່ງເງື່ອນໄຂຮັບເອົາ
- ຄຳຮ້ອງຂໍເອົາ ແລະ ການທວນຄືນເບິ່ງການພະຍາບານຄລັສຊິກ ສຳລັບຄົນແກ່ຊະລາ, ຕາບອດ ຫລື ເສັຽອົງຄະ
- ການປ່ຽນແປງຂອງສະພາບການສຳລັບທຸກໆໂຄງການ
- ການທວນຄືນເບິ່ງກາງຣະຍະເວລາອະນຸມັດສຳລັບທຸກໆໂຄງການ
- ແຫລ່ງຊ່ວຍເຫລືອ ແລະ ການສົ່ງຕໍ່
- ລາຍລະອຽດທົ່ວໄປ

## ສະລູບຄວາມຂອງການບໍລິການ

**ການພິຈາລະນາເບິ່ງເງື່ອນໄຂຮັບເອົາ**

ເຮັດການສຳພາດສຳລັບໃບຄຳຮ້ອງໃຫ້ສຳເລັດ ແລະ ເກັບກຳເອົາຫລັກຖານພິສູດຈຳເປັນທີ່ຕ້ອງການເພື່ອຈະພິຈາລະນາເບິ່ງເງື່ອນໄຂຮັບເອົາດ້ານການເງິນ.

**ການກຳກັບຮັກສາເອກສານ**

ຊ່ວຍຜູ້ໂທມາຜູ້ທີ່ລາຍງານການປ່ຽນແປງໃນລາຍໄດ້, ຂະໜາດຂອງຄອບຄົວ, ທີ່ຢູ່, ສະພາບການຂອງເອກສານ, ອື່ນໆ.

**ການສອບຖາມເບິ່ງຂອງລູກຄ້າ**

ການຕອບການສອບຖາມເບິ່ງລາຍລະອຽດທົ່ວໄປ ແລະ ການສົ່ງຕໍ່ໄປຫາ.

**ການອູ້ມຊູເຣື່ອງພາສາ**

ລາຍການເວົ້າໃນໂທຣະສັບທຸກໆຢ່າງຈະມີໄວ້ໃຫ້ເປັນພາສາອັງກິດ, ສະແປນິຊ, ຣັດເຊັຽ ແລະ ວຽດນາມ. ພວກເຮົາຍັງຈະໃຫ້ການບໍລິການດ້ານນາຍພາສາສຳລັບພາສາສ່ວນຫລາຍ.

**ໜ່ວຍເກັບຮູບພາບ**

ເອກສານທຸກໆຢ່າງຈະຖືກສົ່ງເຂົ້າມາທາງແຟກຊ໌ໄດ້, ເລກໂທຟຣີ, ໄປທີ່ເລກ 888-338-7410 ຫລື ສົ່ງມາທາງໄປສະນີໄປທີ່ PO Box 11699, Tacoma, WA 98411-9905.

## ການເຂົ້າຫາການບໍລິການ

- **ສູນກາງຕິດຕໍ່ປະຊາສັມພັນ**ມີຕົວແທນໄວ້ຮັບໃຊ້ຕັ້ງແຕ່ 8 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ-ວັນສຸກ (ຍົກເວັ້ນວັນພັກບຸນ). ເພື່ອຈະທຳການສຳພາດ ໃຫ້ແລ້ວກະຣຸນາຕິດຕໍ່ຫາພວກເຮົາໃນວັນຈັນ-ວັນສຸກຕັ້ງແຕ່ 8 ໂມງເຊົ້າ ຫາ 3 ໂມງແລງ. ເລກໂທຟຣີຂອງພວກເຮົາແມ່ນເລກ 877-501-2233.
- ລະບົບ **Answer Phone** ຂອງພວກເຮົາໃຫ້ລາຍລະອຽດທັນຕາມ ເວລາກ່ຽວກັບການຊ່ວຍເຫລືອອາຫານ, ເງິນສົດ, ການພະຍາບານ ແລະ ການຝາກເດັກນ້ອຍ, ລາຍລະອຽດກ່ຽວກັບໝາຍນັດພົບ ແລະ ສະພາບ ການຂອງເອກສານ. Answer Phone ມີໄວ້ຮັບໃຊ້ຕະລອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ, ເລກໂທຟຣີ, ທີ່ເລກ 877-980-9220.
- **ໂຄງການຄຳຮ້ອງຂໍລວມໃສ່ກັນຂອງລັດວໍຊິງຕັນ** (WASHCAP) ແມ່ນໂຄງການຊ່ວຍເຫລືອອາຫານງ່າຍໆສຳລັບຜູ້ຮັບເອົາເງິນຄວາມ ປອດພັຍເພີ້ມເຕີມສ່ວນຫລາຍ. ເລກໂທຟຣີແມ່ນເລກ (WASHCAP) 877-380-5784.
- **Washington Connection** ເປັນປະຕູເຂົ້າຫາການຊ່ວຍ ເຫລືອທາງອອນລາຍນ໌ທີ່ມີການເຂົ້າຫາໂຄງການຊ່ວຍເຫລືອອາຫານ, ເງິນສົດ, ພະຍາບານ ແລະ ການຝາກເດັກນ້ອຍ; ການປິ່ນປົວຣະຍະ ຍາວ; ການປິ່ນປົວຢາເສບຕິດ ແລະ ເຫລົ້າ; ການເຂົ້າຫາການບໍລິການຢ່າງອື່ນໆ, ລວມທັງ ຣົ່າ, ການຊ່ວຍເຫລືອບ່ອນຢູ່ອາສັຍ, ການຊ່ວຍເຫລືອນັກຣົບເກົ່າ ແລະ ເງິນຊ່ວຍເຫລືອຄວາມປອດພັຍເພີ້ມເຕີມ (SSI). ທ່ານຍັງສາມາດ ກໍ່ຕັ້ງບັນຊີ Client Benefit Account ໄດ້ອີກຄືກັນເພື່ອຈະກວດ ເບິ່ງຄືນສະພາບເອກສານປັດຈຸບັນຂອງທ່ານ, ລາຍງານການປ່ຽນແປງ ແລະ ເຮັດການສຳພາດທວນຄືນໃຫ້ສຳເລັດ: www.washingtonconnection.org.

